ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 412111, 451116 ແຟັກ: 451222, 263120
NONGBONE RD,VIENTIANE, LAO P.D.R. P.O.BOX 6821, TEL : (865 - 21) 412111, 451116 FAX: 451222, 263120
E-mail:Lcc@laocement.com,www.laocement.com

ເລກທີ 125/ບ.ຊ.ລ

ນະຄອນຫຼວງວຽງຈັນ, ວັນທີ 11 JUN 2020

ໃບລາຍງານ

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື;

ເລື່ອງ : ແຜນການຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 04/ຄຄຊ ລົງວັນທີ 28/01/2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27/9/2018.
- ອີງຕາມການປຶກສາຫາລືຕະຫຼາດຫຼັກຊັບລາວ ແລະບໍລິສັດ ຊີມັງລາວ ມະຫາຊົນ ຄັ້ງວັນທີ 9/6/2020
- ອີງຕາມການຕົກລົງເຫັນດີຂອງຄະນະອຳນວຍການ ບໍລິສັດ ຄັ້ງວັນທີ 9/6/2020

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດສະເໜີລາຍງານມາຍັງທ່ານກ່ຽວກັບແຜນການເປີດ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ຂອງບໍລິສັດ ຊີມັງລາວ ມະຫາຊົນ ສະນັ້ນຈຶ່ງຂໍລາຍງານລາຍລະອຽດດັ່ງລຸ່ມນີ້ :

I. ສາເຫດທີ່ບໍ່ສາມາດເປີດກອງປະຊຸມຜູ້ຖືຮຸ້ນ

1. ຕົ້ນປີ 2020 ໄດ້ມີການປັບປຸງການຈັດຕັ້ງຂອງບໍລິສັດແມ່ທັງຝ່າຍລາວ ແລະຝ່າຍຈີນ ເຊິ່ງມີສະທ້ອນໃຫ້ ມີປ່ຽນແປງກຳມະການສະພາບໍລິຫານຫຼາຍທ່ານ (ຊຶ່ງລວມທັງປະທານ,ຮອງປະທານ,ກຳມະການ ແລະ ເລຂາສະພາບໍລິຫານ)
2. ເນື່ອງຈາກການລະບາດຂອງພະຍາດໂຄວິດ-19 ລັດຖະບານທັງສອງປະເທດລາວ-ຈີນ ຍັງບໍ່ທັນໄດ້ເປີດໃຫ້ ມີການເດີນທາງເຂົ້າອອກປະເທດໄດ້ເທື່ອ (ຖ້າເຂົ້າ ຫຼື ອອກປະເທດຕ້ອງໄດ້ປະຕິບັດໄລຍະເວລາກັກຕົວ 14 ວັນ) ຈຶ່ງໄດ້ເປີດກອງປະຊຸມທາງອອນໄລ.

II. ແຜນການກ່ຽວກັບການເປີດກອງປະຊຸມຜູ້ຖືຮຸ້ນ

1. ທີ 23/6/2020 ເປີດກອງປະຊຸມສະພາບໍລິຫານ
2. ວັນທີ 25/6/2020 ສະເໜີປິດປຶ້ມບັນຊີຜູ້ຖືຮຸ້ນ

3. ວັນທີ 24/6/2020 ເປີດເຜີຍມະຕິກອງປະຊຸມສະພາບໍລິຫານ
4. ວັນທີ 25/6/2020 ເປີດເຜີຍບັດເຊີນ ພ້ອມເອກະສານຕິດຂັດຕ່າງໆ
5. ວັນທີ 30/6/2020 ເປີດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ພ້ອມເປີດເຜີຍບົດລາຍງານການເງິນ ແລະບົດລາຍງານທຸລະກິດ ປະຈຳປີ 2019
6. ວັນທີ 30/6/2020 ເປີດເຜີຍບົດລາຍງານການເງິນ ແລະບົດລາຍງານທຸລະກິດ ປະຈຳປີ 2019
7. 1/7/2020 ເປີດເຜີຍມະຕິກອງປະຊຸມສະພາບໍລິຫານ

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາ ແລະແກ້ໄຂຕາມທາງຄວນດ້ວຍ

ດ້ວຍຄວາມນັບຖືຢ່າງສູງ,

ຜູ້ອຳນວຍການ ບໍລິສັດ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່ຳງ ລ໊ີ